ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0783 /ອຄ
ນະຄອນຫຼວງວຽງຈັນ, ວັນທີ 15 ພຶດສະພາ 2024

# ຂໍ້ຕົກລົງ
# ວ່າດ້ວຍ ເຄື່ອງແບບ, ກາໝາຍ, ແບບພິມ ແລະ ບັດເຈົ້າໜ້າທີ່ການຄ້າ

- ອີງຕາມ ກົດໝາຍ ວ່າດ້ວຍການແຂ່ງຂັນທາງທຸລະກິດ ສະບັບເລກທີ 60/ສພຊ, ລົງວັນທີ 04 ທັນວາ 2012;
- ອີງຕາມ ດຳລັດ ວ່າດ້ວຍການກວດກາການຄ້າ ສະບັບເລກທີ 508/ລບ, ລົງວັນທີ 4 ທັນວາ 2012;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 275/ນຍ, ລົງວັນທີ 01 ກັນຍາ 2023;
- ອີງຕາມ ໜັງສືສະເໜີຂອງກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ສະບັບເລກທີ 0146/ກຂກຄ, ລົງວັນທີ 02 ພຶດສະພາ 2024.

**ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດລະບຽບການ ກ່ຽວກັບການຄຸ້ມຄອງ, ການນຳໃຊ້ ເຄື່ອງແບບ, ກາໝາຍ, ແບບພິມ ແລະ ບັດເຈົ້າໜ້າທີ່ການຄ້າ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານຂອງພະນັກງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ແລະ ເຈົ້າໜ້າທີ່ການຄ້າ ແນໃສ່ເຮັດໃຫ້ການປະຕິບັດໜ້າທີ່ວຽກງານແຂ່ງຂັນທາງທຸລະກິດ, ປົກປ້ອງຜູ້ຊົມໃຊ້, ກວດກາການຄ້າ ແລະ ແກ້ໄຂການລະເມີດທາງການຄ້າ ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

### ມາດຕາ 2 ເຄື່ອງແບບ, ກາໝາຍ, ແບບພິມ ແລະ ບັດເຈົ້າໜ້າທີ່ການຄ້າ

ເຄື່ອງແບບ, ກາໝາຍ, ແບບພິມ ແລະ ບັດເຈົ້າໜ້າທີ່ການຄ້າ ແມ່ນ ເຄື່ອງມືທີ່ຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານແຂ່ງຂັນທາງທຸລະກິດ, ປົກປ້ອງຜູ້ຊົມໃຊ້, ກວດກາການຄ້າ ແລະ ແກ້ໄຂການລະເມີດທາງການຄ້າ ມີລັກສະນະ, ມີສີສັນ ແລະ ຮູບຊົງສະເພາະ ເພື່ອນຳໃຊ້ເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍ ດັ່ງນີ້:

1. **ພະນັກງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ໝາຍເຖິງ** ລັດຖະກອນ ທີ່ເຮັດໜ້າທີ່ກ່ຽວກັບວຽກງານແຂ່ງຂັນທາງທຸລະກິດ, ປົກປ້ອງຜູ້ຊົມໃຊ້, ກວດກາການຄ້າ ແລະ ແກ້ໄຂການລະເມີດທາງການຄ້າ ທີ່ສັງກັດໃນຂອບເຂດທົ່ວປະເທດ ຊຶ່ງຂັ້ນສູນກາງ, ແຂວງ, ນະຄອນຫຼວງ ແຕ່ງຕັ້ງໂດຍລັດຖະມົນຕີ ສຳລັບຂັ້ນເມືອງ, ນະຄອນ ແຕ່ງຕັ້ງໂດຍຮອງລັດຖະມົນຕີຜູ້ຊີ້ນຳ;

2. **ເຈົ້າໜ້າທີ່ການຄ້າ ໝາຍເຖິງ** ເຈົ້າໜ້າທີ່ແຂ່ງຂັນທາງທຸລະກິດ, ເຈົ້າໜ້າທີ່ປົກປ້ອງຜູ້ຊົມໃຊ້ ແລະ ເຈົ້າໜ້າທີ່ກວດກາການຄ້າ ທີ່ໄດ້ຮັບການແຕ່ງຕັ້ງຕາມກົດໝາຍ ແລະ ລະບຽບການ ທີ່ກຳນົດໄວ້.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ພະນັກງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ແລະ ເຈົ້າໜ້າທີ່ການຄ້າ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ເຄື່ອງແບບ, ກາໝາຍ, ແບບພິມ ແລະ ບັດເຈົ້າໜ້າທີ່ການຄ້າ

**ມາດຕາ 5 ເຄື່ອງແບບ**

ເຄື່ອງແບບ ຂອງ ພະນັກງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ແລະ ເຈົ້າໜ້າທີ່ການຄ້າ ມີລາຍລະອຽດ ດັ່ງນີ້:

1. ເຄື່ອງແບບຊຸດໃຫຍ່ ເປັນແພສີກາກີ ກາສິງຄູ່ ເບີ TTL369 ເປັນເສື້ອແວັດຄໍເປີດ, ມີປ່ອງທະນູບ່າ, ມີ 04 ຖົງທີ່ມີຝາປົດ, ຕິດກະດຸມເຮັດດ້ວຍສິນຄ້າ, ຢູ່ປາຍແຂນເສື້ອຕິດກະດຸມສິນຄ້າ ເບື້ອງລະສີ່ໜ່ວຍ;

2. ເສື້ອເຊີດຄໍປິດ ແຂນສັ້ນ ຫຼື ແຂນຍາວ ສີກາກີ ກາສິງຄູ່ ເບີ TTL369 ແລະ ສີຂຽວຂີ້ມ້າອ່ອນ, ແອວປ່ອຍ ແລະ ແອວຕັ້ງ ໜຍິບດູກນອກສອງຄອງເປັນດູກຄູ່ ມີຂະໜາດພໍດີກັບຜູ້ສວມໃສ່, ມີສອງຖົງນອກຝາປົດຕິດກະດຸມດ້ານເທິງ, ມີກີບໜ້າກະດຸມ 6 ໜ່ວຍ ແລະ ມີຕ່ອງໃສ່ທະນູບ່າສອງເບື້ອງ;

3. ເສື້ອສະຟາລີຄໍປິດ ແຂນສັ້ນ ຫຼື ແຂນຍາວ ສີກາກີ ກາສິງຄູ່ ເບີ TTL369 ແລະ ສີຂຽວຂີ້ມ້າອ່ອນ, ແອວປ່ອຍໜຍິບດູກນອກສອງຄອງເປັນດູກຄູ່ ມີຂະໜາດພໍດີກັບຜູ້ສວມໃສ່, ມີສອງຖົງນອກດ້ານເທິງ ມີກີບໜ້າ ມີຝາປົດຕິດກະດຸມ, ສອງຖົງດ້ານລຸ່ມສອງຂ້າງ, ແຈກດ້ານຫຼັງ ຫຼື ແຈກດ້ານຂ້າງ ສອງຂ້າງ, ດ້ານໜ້າຕິດກະດຸມ 6 ໜ່ວຍ ແລະ ມີຕ່ອງໃສ່ທະນູບ່າສອງເບື້ອງ;

4. ເສື້ອຫຼອງໃນເຄື່ອງແບບຊຸດໃຫຍ່ ແມ່ນນຳໃຊ້ເສື້ອເຊີດຄໍປິດ ແຂນສັ້ນ ຫຼື ແຂນຍາວ ສີຂຽວຂີ້ມ້າອ່ອນ ມີລັກສະນະແບບດຽວກັບທີ່ໄດ້ກຳນົດໄວ້ໃນຂໍ້ທີ 2 ຂອງມາດຕານີ້

5. ເສື້ອຢືດຄໍມົນສີຂາວ ສຳລັບຊ້ອນໃນ ພ້ອມດ້ວຍຕິດກາໝາຍ ຂະໜາດ 5x7 ຊັງຕີແມັດ ໃສ່ໜ້າເອິກເບື້ອງເທິງກ້ຳຊ້າຍ;

6. ເສື້ອກັກສີຂຽວອ່ອນ ມີແຖບສະທ້ອນແສງ, ແອວປ່ອຍ, ໃສ່ຊິບຮູດ, ດ້ານໜ້າທາງເທິງກ້ຳຊ້າຍມີກາໝາຍເຈົ້າໜ້າທີ່ການຄ້າ, ດ້ານຫຼັງມີໂຕໜັງສືສີຂາວຂຽນເປັນພາສາລາວວ່າ: "ເຈົ້າໜ້າທີ່ການຄ້າ" ດ້ານລຸ່ມຂອງພາສາລາວໃຫ້ຂຽນເປັນພາສາອັງກິດວ່າ: "TRADE AUTHORITY"

7. ໂສ້ງຂາຍາວ ສີກາກີ ກາສິງຄູ່ ເບີ TTL369, ມີດູກຂ້າງ, ມີສອງກີບເບື້ອງຂວາ ແລະ ຊ້າຍ, ມີສອງຖົງໜ້າ, ມີສອງຖົງຫຼັງດ້ານຂວາ ແລະ ຊ້າຍ, ມີ 08 ຕ່ອງຫົວໂສ້ງ. ສຳລັບເພດຍິງ ມີໂສ້ງຄືກັບເພດຊາຍ ແລະ ສິ້ນສີກາກີ ກາສິງຄູ່ ເບີ TTL369, ຫົວຕໍ່ມີຕີນ, ຫົວສິ້ນກວ້າງ 2 ຫາ 4 ຊັງຕີແມັດ ຕີນສິ້ນກວ້າງ 15-20 ຊັງຕີແມັດ, ພື້ນເຄືອບຕີນສິ້ນເປັນສີກາກີ ຕໍ່າດ້ວຍໄໝສີຄຳເປັນລັກສະນະລວດລາຍລາວ;

8. ສາຍແອວສີດຳ ສຳລັບເພດຍິງ ແລະ ເພດຊາຍ ມີຄວາມກວ້າງພໍດີກັບຕ່ອງສາຍແອວ, ຫົວສາຍແອວເປັນໂລຫະສີນ້ຳຄຳ ເປັນຮູບສີ່ຫຼ່ຽມ ຂະໜາດ 3.5x4 ຊັງຕີແມັດ ປ້ຳນູນກາໝາຍເຈົ້າໜ້າທີ່ການຄ້າ ຂະໜາດ 2.5x3 ຊັງຕີແມັດ ຢູ່ດ້ານໜ້າຫົວສາຍແອວ;

9. ກາລະວັດ ເປັນແພສີກາກີ ກາສິງຄູ່ ເບີ TTL369;

10. ໝວກເຈົ້າໜ້າທີ່ການຄ້າ, ພະນັກງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ເປັນແພສີກາກີ ກາສິງຄູ່ ເບີ TTL369 ມີສອງຊະນິດ ຄື: ໝວກແງັບ ແລະ ໝວກແກັບປີ້;

11. ເກີບສຳລັບເພດຍິງ ແລະ ເພດຊາຍ ເປັນເກີບໜັງຫຸ້ມສົ້ນສີດຳ ຫຼື ສີນ້ຳຕານ, ເກີບເພດຍິງສົ້ນສູງບໍ່ໃຫ້ເກີນ 3 ຊັງຕີແມັດ.

**ມາດຕາ 6 ກາໝາຍ ແລະ ເຄື່ອງກາໝາຍ**

ກາໝາຍ ເຈົ້າໜ້າທີ່ການຄ້າ ເປັນຮູບໜ່ວຍໄຂ່ລວງຕັ້ງ, ພື້ນສີຟ້າ, ຂອບເບື້ອງເທິງມີຫ້າຫຼ່ຽມ, ຂອບ ລຸ່ມເຈັ້ຍສ້ອຍມີສາມຫຼ່ຽມ (ຄືຮູບໃບໂພ), ດ້ານໃນມີກາຮວງເຂົ້າ (ສີເຫຼືອງ) ສອງຮວງກົ່ງປາຍເຂົ້າຫາກັນ, ຢູ່ເຄິ່ງກາງມີຮູບທຸງຊາດລາວ, ມີຮູບຊິງຊັ່ງ (ສີດຳ), ຢູ່ດ້ານລຸ່ມຂອງຮູບຮວງເຂົ້າ ແມ່ນມີຕົວໜັງສືພາສາລາວ (ຂຽນເປັນໂຕໜັງສືສີເຫຼືອງ) ຂຽນວ່າ: "ເຈົ້າໜ້າທີ່ການຄ້າ" ແລະ ຢູ່ດ້ານລຸ່ມຖັດລົງໄປຈາກຕົວໜັງສືພາສາລາວ ມີຕົວໜັງສືພາສາອັງກິດ (ຂຽນເປັນໂຕໜັງສືສີຂາວ) ຂຽນວ່າ: "TRADE AUTHORITY" ແລະ ທັງສອງຂ້າງເບື້ອງຊ້າຍ ແລະ ເບື້ອຂວາຂອງຕົວໜັງສືພາສາອັງກິດ ແມ່ນມີຮູບລາຍກະນົກ (ສີເຫຼືອງ).

ເຄື່ອງກາໝາຍ ເຈົ້າໜ້າທີ່ກວດກາການຄ້າ ມີລັກສະນະເປັນເອກະລັກສະເພາະ ປະກອບມີ: ກາຕິດເສື້ອ, ກາຕິດໝວກ, ກາຕິດຄໍເສື້ອ, ທະນູບ່າ, ເຄື່ອງໝາຍປະດັບຊັ້ນ, ປ້າຍອາຍຸການ ແລະ ປ້າຍຊື່ ລາຍລະອຽດ ດັ່ງນີ້:

**1. ກາໝາຍຕິດເສື້ອ**

ກາໝາຍຕິດເສື້ອ ແມ່ນປັກແສ່ວດ້ວຍໄໝ ຮູບກາໝາຍເຈົ້າໜ້າທີ່ການຄ້າ ມີຂະໜາດ 7 x 9 ຊັງຕີແມັດ ແລະ 5 x 7 ຊັງຕີແມັດ.

**2. ກາໝາຍຕິດໝວກ**

ກາໝາຍຕິດໝວກ ປະກອບມີ ສອງ ຊະນິດ ດັ່ງນີ້:

**ຊະນິດທີ 1** ປ້ຳດ້ວຍແຜ່ນໂລຫະ ເປັນນູນ ຮູບກາໝາຍເຈົ້າໜ້າທີ່ການຄ້າ ຂະໜາດ 3 x 5 ຊັງຕີແມັດ;

**ຊະນິດທີ 2** ປັກແສ່ວດ້ວຍໄໝ ຮູບກາໝາຍເຈົ້າໜ້າທີ່ການຄ້າ ຂະໜາດ 5 x 7 ຊັງຕີແມັດ.

**3. ກາໝາຍຕິດຄໍເສື້ອ**

ເປັນຮູບວົງຮີ ປ້ຳດ້ວຍແຜ່ນໂລຫະເຄືອບສີນ້ຳຄຳ ເປັນນູນຂະໜາດ 2x2.5 ຊັງຕີແມັດ, ສ່ວນລຸ່ມເປັນຮູບລວດລາຍກັນດົກ ມີຮູບຮວງເຂົ້າທັງສອງຂ້າງກົ່ງເຂົ້າຫາກັນ ຢູ່ກາງມີຕົວໜັງສືຫຍໍ້: "ຈກຄ" ມີຄວາມໝາຍວ່າ: ເຈົ້າໜ້າທີ່ການຄ້າ.

**4. ທະນູບ່າ**

ລັກສະນະທະນູບ່າ ມີພື້ນເປັນແພໄໝສີນ້ຳຄຳ ແລະ ສີຟ້າແກ່ , ຕ່ຳລາຍລາວ ມີຂະໜາດກວ້າງທາງກົກ 5 ຊັງຕີແມັດ, ກວ້າງທາງປາຍ 4 ຊັງຕີແມັດ, ລວງຍາວ 13,5 ຊັງຕີແມັດ, ມີຂອບຂ້າງສີນ້ຳຄຳ ຂະໜາດ 0,5 ຊັງຕີແມັດ, ປາຍທະນູບ່າຕິດກະດຸມປ້ຳດ້ວຍໂລຫະເຄືອບສີນ້ຳຄຳ (ຮູບທາດຫຼວງ ອ້ອມດ້ວຍຮວງເຂົ້າກົ່ງເຂົ້າຫາກັນ).

**5. ເຄື່ອງໝາຍປະດັບຊັ້ນ**

ເຄື່ອງໝາຍປະດັບຊັ້ນ ແມ່ນເຄື່ອງໝາຍໃຊ້ບົ່ງບອກຕຳແໜ່ງງານ ແລະ ບ່ອນປະຈຳການ ຂອງ ພະນັກງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ແລະ ເຈົ້າໜ້າທີ່ການຄ້າ ປະກອບມີ 02 ຮູບແບບ ຄື: ເຄື່ອງໝາຍດາວ ແລະ ເຄື່ອງໝາຍຂີດ.

**ເຄື່ອງໝາຍດາວ** ແມ່ນໃຊ້ບົ່ງບອກຕຳແໜ່ງງານ ເຮັດດ້ວຍໂລຫະເຄືອບສີນຄ້າ ເປັນຮູບດາວ 5 ລ່ຽມນູນກາງ ມີ 3 ຂະໜາດ ຄື:

- ເຄື່ອງໝາຍດາວ ຂະໜາດ 24,5 ມິນລີແມັດ;
- ເຄື່ອງໝາຍດາວ ຂະໜາດ 21,5 ມິນລີແມັດ;

- ເຄື່ອງໝາຍດາວ ຂະໜາດ 14 ມິນລີແມັດ.

**ເຄື່ອງໝາຍຂີດ** ແມ່ນໃຊ້ບົ່ງບອກບ່ອນປະຈໍາການ ເຮັດດ້ວຍໂລຫະເຄືອບສີນຄໍາ ເປັນຮູບສີ່ແຈສາກ ມີຂະໜາດ 0,5x3,5 ຊັງຕີແມັດ.

**6. ປ້າຍຊື່**

ປ້າຍຊື່ ແມ່ນເຮັດດ້ວຍປລາສະຕິກທີ່ລະບຸ ຊື່ ແລະ ນາມສະກຸນ ເປັນພາສາລາວ ແລະ ພາສາອັງກິດ ມີຂະໜາດຄວາມກວ້າງ 2 ຊັງຕີແມັດ ແລະ ຍາວ 8 ຊັງຕີແມັດ ມີພື້ນສີຟ້າ, ຕົວໜັງສືສີດໍາ, ຂອບປ້າຍເປັນສີດໍາມີກາໝາຍ ເຈົ້າໜ້າທີ່ການຄ້າ ຂະໜາດ 1.5 x 1.8 ຊັງຕີແມັດ ຢູ່ກ້ຳຂວາຂອງປ້າຍ.

**ມາດຕາ 7 ແບບພິມ**

ແບບພິມແຂ່ງຂັນທາງທຸລະກິດ ແລະ ກອດກາການຄ້າ ແມ່ນເຈ້ຍກາກບອນ ທີ່ສາມາດຂຽນຊອດໃສ່ກັນ, ມີຂະໜາດເຈ້ຍ A4 ແຕ່ລະຊຸດມີ 3 ໃບ, 3 ສີ ຄື: ສີຂາວ, ເຫຼືອງ ແລະ ບົວ ແຕ່ລະໃບມີລາຍຈ້ຳກາໝາຍເຈົ້າໜ້າທີ່ການຄ້າ, ຊຶ່ງແບບພິມດັ່ງກ່າວ ປະກອບມີ 8 ແບບພິມ ດັ່ງນີ້:

ແບບພິມ 1. ຂໍ້ຕົກລົງແຕ່ງຕັ້ງພະນັກງານໄປປະຕິບັດວຽກງານການແຂ່ງຂັນທາງທຸລະກິດ ແລະ ກອດກາການຄ້າ;

ແບບພິມ 2 ບົດບັນທຶກການກອດກາ;

ແບບພິມ 3 ບົດລາຍງານຜົນການກອດກາ;

ແບບພິມ 4 ຂໍ້ຕົກລົງ ກ່ຽວກັບການພິຈາລະນາຜົນກອດກາ;

ແບບພິມ 5 ບົດບັນທຶກການສົມຍອມ;

ແບບພິມ 6 ບົດບັນທຶກກ່າວເຕືອນ;

ແບບພິມ 7 ບົດບັນທຶກມອບ-ຮັບ;

ແບບພິມ 8 ໃບສັ່ງມອບ.

**ມາດຕາ 8 ບັດເຈົ້າໜ້າທີ່ການຄ້າ**

ບັດເຈົ້າໜ້າທີ່ການຄ້າ ເຮັດດ້ວຍປລາສະຕິກ ເປັນຮູບສີ່ແຈສາກ, ຂະໜາດ 8.5 x 5.5 ຊັງຕີແມັດ ລັກສະນະລະອຽດຂອງບັດ ມີດັ່ງນີ້:

**1. ດ້ານໜ້າ:** ພື້ນດ້ານເທິງເປັນສີແດງ ທັດລົງມາສີກາກີ ຄ້າຍກັບຄືເຄື່ອງແບບ ຕໍ່ລົງມາເປັນສີຂາວ ມີກາໝາຍເຈົ້າໜ້າທີ່ການຄ້າ ຢູ່ດ້ານເທິງ, ດ້ານລຸ່ມກາໝາຍມີຕົວໜັງສືສີຟ້າ ຂຽນວ່າ: ກະຊວງອຸດສາຫະກຳ ແລະ ການຄ້າ ລຸ່ມລົງມາຂຽນວ່າ: ກົມແຂ່ງຂັນທາງທຸລະກິດ ແລະ ກອດກາການຄ້າ ບັດເຈົ້າໜ້າທີ່ການຄ້າ ຖັດລົງມາມີເລກລະຫັດເປັນສີແດງ ແລະ ມີລາຍເຊັນ, ກາຈ້ຳ ຂອງຫົວໜ້າກົມແຂ່ງຂັນທາງທຸລະກິດ ແລະ ກອດກາການຄ້າ ຢູ່ທາງລຸ່ມດ້ານຂວາມື.

**2. ດ້ານຫຼັງ:** ພື້ນດ້ານເທິງເປັນສີແດງ ຖັດລົງມາສີກາກີ ຄ້າຍຄືກັບສີເຄື່ອງແບບ ຕໍ່ລົງມາເປັນສີຂາວ, ມີຂອບສີແດງ ມີຕົວໜັງສືສີຟ້າ ມີຄໍາແນະນໍາໂດຍມີເນື້ອໃນດັ່ງນີ້:

2.1 ບັດນີ້ໃຊ້ສະເພາະຜູ້ທີ່ຖືກແຕ່ງຕັ້ງເປັນເຈົ້າໜ້າທີ່ກອດກາການຄ້າເທົ່ານັ້ນ, ຖ້າຜູ້ໃດປອມແປງ ຫຼື ເອົາໄປນໍາໃຊ້ ຈະໄດ້ຮັບໂທດຕາມກົດໝາຍ ແລະ ລະບຽບການ;

2.2 ອົງການຈັດຕັ້ງ, ອໍານາດການປົກປ້ອງທຸກຂັ້ນຈົ່ງຮັບຮູ້ ແລະ ອໍານວຍຄວາມສະດວກໃຫ້ຜູ້ກ່ຽວໃນການປະຕິບັດໜ້າທີ່ດ້ວຍ;

2.3 ຖ້າມີການຕົກເຮ່ຍເສຍຫາຍ ຕ້ອງແຈ້ງໃຫ້ກົມແຂ່ງຂັນທາງທຸລະກິດ ແລະ ກອດກາການຄ້າ ຊາບ ແລະ ອອກບັດໃຫມ່ດ່ວນ.

## ໝວດທີ 3
## ການນຳໃຊ້ ເຄື່ອງແບບ, ກາໝາຍ, ແບບພິມ ແລະ ບັດເຈົ້າໜ້າທີ່ການຄ້າ

**ມາດຕາ 9 ການນຳໃຊ້ເຄື່ອງແບບ**

ການນຳໃຊ້ເຄື່ອງແບບ ແມ່ນ ນຳໃຊ້ສະເພາະ ພະນັກງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ແລະ ເຈົ້າໜ້າທີ່ການຄ້າ, ໃນການເຄື່ອນໄຫວວຽກງານ ທາງລັດຖະການ ຕາມສິດ ແລະ ໜ້າທີ່ຂອງຕົນ.

ສຳລັບເສື້ອສະຟາລີຄໍປິດ ແມ່ນນຳໃຊ້ສະເພາະ ພະນັກງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ແລະ ເຈົ້າໜ້າທີ່ການຄ້າ ຜູ້ທີ່ມີຕຳແໜ່ງງານບໍລິຫານເທົ່ານັ້ນ.

**ມາດຕາ 10 ການນຳໃຊ້ກາໝາຍ ແລະ ເຄື່ອງກາໝາຍ**

ການນຳໃຊ້ກາໝາຍເຈົ້າໜ້າທີ່ການຄ້າ ຕາມທີ່ກຳນົດໄວ້ໃນ ມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ແມ່ນນຳໃຊ້ກັບເຄື່ອງແບບ, ພາຫະນະ, ບັດເຈົ້າໜ້າທີ່ການຄ້າ, ຕຶກສຳນັກງານ-ອົງການ ແລະ ອື່ນໆ ທີ່ນຳໃຊ້ເຂົ້າໃນການເຄື່ອນໄຫວປະຕິບັດໜ້າທີ່ ຂອງ ພະນັກງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ແລະ ເຈົ້າໜ້າທີ່ການຄ້າ ລະອຽດດັ່ງນີ້:

1. **ກາໝາຍຕິດເສື້ອ**

   ກາໝາຍຕິດເສື້ອ ໃຊ້ຕິດໃສ່ເສື້ອເຊີດຄໍປິດ, ເສື້ອສະຟາລີຄໍປິດ, ເສື້ອຫຼອງໃນ, ເສື້ອຢືດຄໍມົນ ແລະ ເສື້ອກັກ.

2. **ກາໝາຍຕິດໝວກ**

   ກາໝາຍຕິດໝວກຊະນິດທີ 1 ໃຊ້ສຳລັບຕິດໃສ່ໝວກແກັບປີ;

   ກາໝາຍຕິດໝວກຊະນິດທີ 2 ໃຊ້ສຳລັບຕິດໃສ່ໝວກແງັບ.

3. **ກາໝາຍຕິດຄໍເສື້ອ**

   ກາໝາຍຕິດຄໍເສື້ອ ໃຊ້ຕິດໃສ່ຄໍເສື້ອທັງສອງເບື້ອງ ຂອງເຄື່ອງແບບຊຸດໃຫຍ່, ເສື້ອເຊີດຄໍປິດ ແລະ ເສື້ອສະຟາລີຄໍປິດ.

4. **ທະນູບ່າ**

   ທະນູບ່າ ຂອງ ພະນັກງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ແລະ ເຈົ້າໜ້າທີ່ການຄ້າ ປະກອບມີ ສອງ ປະເພດ ດັ່ງນີ້:

   **ປະເພດທີ 1:** ທະນູບ່າມີພື້ນເປັນແພໄໝສີນ້ຳຄຳ ຕ່ຳລາຍລາວ, ຂອບຂ້າງສີນ້ຳຄຳ ຂະໜາດ 0,5 ຊັງຕີແມັດ, ມີຂະໜາດກວ້າງທາງກົກ 5 ຊັງຕີແມັດ, ກວ້າງທາງປາຍ 4 ຊັງຕີແມັດ, ລວງຍາວ 13,5 ຊັງຕີແມັດ ໃຊ້ສຳລັບ ລັດຖະມົນຕີ, ຮອງລັດຖະມົນຕີ ຜູ້ຊີ້ນຳ ແລະ ຫົວໜ້າກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ;

   **ປະເພດທີ 2:** ທະນູບ່າມີພື້ນແພແກ່ສີຟ້າ, ຂອບຂ້າງສີນ້ຳຄຳ ຂະໜາດ 0,5 ຊັງຕີແມັດ, ມີຂະໜາດກວ້າງທາງກົກ 5 ຊັງຕີແມັດ, ກວ້າງທາງປາຍ 4 ຊັງຕີແມັດ, ລວງຍາວ 13,5 ຊັງຕີແມັດ ໃຊ້ສຳລັບ ພະນັກງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ແລະ ເຈົ້າໜ້າທີ່ການຄ້າ ໃນຂອບເຂດທົ່ວປະເທດ.

5. **ເຄື່ອງໝາຍປະດັບຊັ້ນ**

   ການນຳໃຊ້ ເຄື່ອງໝາຍປະດັບຊັ້ນຂອງ ພະນັກງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ແລະເຈົ້າໜ້າທີ່ການຄ້າ ມີລາຍລະອຽດ ດັ່ງນີ້:

**5.1 ການປະດັບທະນູບ່າພື້ນແພໄໝສີນ້ຳຄຳ ດ້ວຍດາວຂະໜາດ 24,5 ມິນລີແມັດ ປະກອບມີ:**

- ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ມີ ສາມ ດາວ;
- ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຜູ້ຊີ້ນຳ ມີ ສອງ ດາວ;
- ຫົວໜ້າກົມ ແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ມີ ໜຶ່ງ ດາວ.

**5.2 ການປະດັບທະນູບ່າພື້ນສີຟ້າແກ່ ດ້ວຍດາວຂະໜາດ 21,5 ມິນລີແມັດ ແລະ ຂີດໝາຍບ່ອນປະຈຳການ ປະກອບມີ:**

**ຂັ້ນສູນກາງ:**

- ຮອງຫົວໜ້າກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ມີ ສາມ ດາວ ແລະ ສາມ ຂີດໝາຍ;
- ຫົວໜ້າພະແນກ ມີ ສອງ ດາວ ແລະ ສາມ ຂີດໝາຍ;
- ຮອງຫົວໜ້າພະແນກ ມີ ໜຶ່ງ ດາວ ແລະ ສາມ ຂີດໝາຍ;

**ຂັ້ນແຂວງ:**

- ຫົວໜ້າພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີ ສາມ ດາວ ແລະ ສອງ ຂີດໝາຍ;
- ຮອງຫົວໜ້າພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີ ສອງ ດາວ ແລະ ສອງ ຂີດໝາຍ;
- ຫົວໜ້າຂະແໜງ (ແຂ່ງຂັນທາງທຸລະກິດ ແລະ ກວດການຄ້າ) ມີ ໜຶ່ງ ດາວ ແລະ ສອງ ຂີດໝາຍ;

**ຂັ້ນເມືອງ:**

- ຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ມີ ສອງດາວ ແລະ ໜຶ່ງ ຂີດໝາຍ;
- ຮອງຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ມີ ໜຶ່ງດາວ ແລະ ໜຶ່ງ ຂີດໝາຍ

**5.3 ການປະດັບທະນູບ່າພື້ນສີຟ້າແກ່ ດ້ວຍດາວຂະໜາດ 14 ມິນລີແມັດ ແລະ ຂີດໝາຍບ່ອນປະຈຳການ ປະກອບມີ:**

**ຂັ້ນສູນກາງ:**

- ວິຊາການສັງກັດກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ທີ່ມີອາຍຸການ ສາມ ປີ ຂຶ້ນໄປ ມີ ສາມ ດາວ ແລະ ສາມ ຂີດໝາຍ;
- ວິຊາການສັງກັດກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ທີ່ມີອາຍຸການ ສອງ ປີ ຂຶ້ນໄປ ມີ ສອງ ດາວ ແລະ ສາມ ຂີດໝາຍ;
- ວິຊາການສັງກັດກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ທີ່ມີອາຍຸການ ໜຶ່ງ ປີ ຂຶ້ນໄປ ມີ ໜຶ່ງ ດາວ ແລະ ສາມ ຂີດໝາຍ;
- ວິຊາການສັງກັດກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ທີ່ເປັນລັດຖະກອນ 95% ບໍ່ມີດາວ ແລະ ສາມ ຂີດໝາຍ;

**ຂັ້ນແຂວງ:**

- ຮອງຫົວໜ້າຂະແໜງ (ແຂ່ງຂັນທາງທຸລະກິດ ແລະ ກວດການຄ້າ) ມີ ສາມ ດາວ ແລະ ສອງ ຂີດໝາຍ;
- ວິຊາການສັງກັດຂະແໜງແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ທີ່ມີອາຍຸການ ສາມ ປີ ຂຶ້ນໄປ ມີ ສອງ ດາວ ແລະ ສອງ ຂີດໝາຍ;
- ວິຊາການສັງກັດຂະແໜງແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ທີ່ມີອາຍຸການ ໜຶ່ງ ປີ ຂຶ້ນໄປ ມີ ໜຶ່ງ ດາວ ແລະ ສອງ ຂີດໝາຍ;
- ວິຊາການສັງກັດຂະແໜງແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ທີ່ເປັນລັດຖະກອນ 95% ບໍ່ມີ ດາວ ແລະ ສອງ ຂີດໝາຍ;

**ຂັ້ນເມືອງ**:

- ວິຊາການສັງກັດໜ່ວຍງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ທີ່ມີອາຍຸການ ສາມປີ ຂຶ້ນໄປ ມີ ສອງ ດາວ ແລະ ໜຶ່ງ ຂີດໝາຍ;
- ວິຊາການສັງກັດໜ່ວຍງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ທີ່ມີອາຍຸການ ໜຶ່ງປີ ຂຶ້ນໄປ ມີໜຶ່ງ ດາວ ແລະ ໜຶ່ງ ຂີດໝາຍ;
- ວິຊາການສັງກັດໜ່ວຍງານແຂ່ງຂັ້ນທາງທຸລະກິດ ແລະ ກວດກາການຄ້າ ທີ່ເປັນລັດຖະກອນ 95% ບໍ່ມີ ດາວ ແລະ ໜຶ່ງ ຂີດໝາຍ;

**ມາດຕາ 11 ການນຳໃຊ້ແບບພິມ**

ການນຳໃຊ້ແບບພິມ ເຂົ້າໃນການເຄື່ອນໄຫວວຽກງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ແມ່ນອີງຕາມແຕ່ລະກໍລະນີ ຊຶ່ງແຕ່ລະແບບພິມ 1 ຊຸດປະກອບມີ 3 ໃບ (3 ສີ) ການນຳໃຊ້ແບບພິມ ໃຫ້ປະຕິບັດດັ່ງນີ້:

1) ໃບທີ 1 ສີຂາວ ເອົາປະກອບໃສ່ຊຸດເອກະສານດຳເນີນການແກ້ໄຂ;
2) ໃບທີ 2 ສີບົວ ສຳເນົາໄວ້ປຶ້ມແບບພິມ;
3) ໃບທີ 3 ສີເຫຼືອງ ເອົາໃຫ້ຜູ້ຖືກກວດກາ ຫຼື ຄູ່ກໍລະນີ.

**ມາດຕາ 12 ການນຳໃຊ້ບັດເຈົ້າໜ້າທີ່ການຄ້າ**

ການນຳໃຊ້ບັດເຈົ້າໜ້າທີ່ການຄ້າ ແມ່ນນຳໃຊ້ເຂົ້າໃນການເຄື່ອນໄຫວປະຕິບັດຂອງເຈົ້າໜ້າທີ່ການຄ້າ ຊຶ່ງຕ້ອງແມ່ນຜູ້ທີ່ຖືກມອບໝາຍ ຫຼື ແຕ່ງຕັ້ງໃຫ້ໄປດຳເນີນການກວດກາ ຈຶ່ງສາມາດນຳໃຊ້ບັດໄດ້ ພາຍຫຼັງສຳເລັດການກວດກາ ຕ້ອງໄດ້ສົ່ງຄືນ.

## ໝວດທີ 4
## ການຄຸ້ມຄອງ, ການປະກອບເຄື່ອງແບບ, ການປະດັບຊັ້ນ ແລະ ງົບປະມານ

**ມາດຕາ 13 ການຄຸ້ມຄອງ**

ກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ເປັນຜູ້ຄຸ້ມຄອງ ເຄື່ອງແບບ, ກາໝາຍ, ແບບພິມ ແລະ ອອກບັດເຈົ້າໜ້າທີ່ການຄ້າ ໃຫ້ ຂັ້ນທ້ອງຖິ່ນ ພາຍໃຕ້ຄວາມຮັບຜິດຊອບຂອງຕົນ.

ສຳລັບບັດເຈົ້າໜ້າທີ່ການຄ້າ ແມ່ນກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ເປັນຜູ້ອອກບັດເຈົ້າ ໜ້າທີ່ການຄ້າໃນຂອບເຂດທົ່ວປະເທດ ແລະ ມອບໃຫ້ແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ຂັ້ນທ້ອງຖິ່ນ ແຕ່ລະຂັ້ນເປັນຜູ້ຄຸ້ມຄອງ ແລະ ນຳໃຊ້.

ບັດເຈົ້າໜ້າທີ່ການຄ້າ ໃຊ້ສະເພາະຜູ້ທີ່ເປັນເຈົ້າໜ້າທີ່ການຄ້າເທົ່ານັ້ນ; ໃນກໍລະນີ ເຈົ້າໜ້າທີ່ການຄ້າ ເອົາບັດໃຫ້ບຸກຄົນອື່ນນຳໃຊ້ໂດຍເຈດຕະນາ ຫຼື ບໍ່ເຈດຕະນາກໍຕາມ ຈະຖືກປະຕິບັດຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

ໃນກໍລະນີ ບັດເຈົ້າໜ້າທີ່ການຄ້າຕົກເຮ່ຍເສຍຫາຍ ຕ້ອງແຈ້ງໃຫ້ແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ແຕ່ລະຂັ້ນຂອງຕົນ ແລະ ກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ຮັບຊາບໂດຍດ່ວນ.

**ມາດຕາ 14 ການປະກອບເຄື່ອງແບບ**

ການປະກອບເຄື່ອງແບບ ແລະ ກາໝາຍ ໃຫ້ ພະນັກງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ແລະ ເຈົ້າໜ້າທີ່ການຄ້າ ປະຕິບັດດັ່ງນີ້:

1. ປະກອບເຄື່ອງແບບ ແລະ ກາໝາຍ ສອງຊຸດຕໍ່ຄົນຕໍ່ປີ;
2. ເຄື່ອງແບບຊຸດໃຫຍ່ ໜຶ່ງຜືນ ຕໍ່ຄົນ ຕໍ່ສາມປີ;
3. ຈຳນວນບັດເຈົ້າໜ້າທີ່ການຄ້າ ປະກອບໃຫ້ຕາມຄວາມເໝາະສົມ.

**ມາດຕາ 15 ການປະດັບຊັ້ນ**

ການປະດັບຊັ້ນ ໃຫ້ ພະນັກງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ແລະ ເຈົ້າໜ້າທີ່ການຄ້າ ມອບໃຫ້ກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ກຳນົດຂັ້ນຕອນ, ຮູບແບບ, ວິທີການ ແລະ ພິທີການ.

**ມາດຕາ 16 ງົບປະມານ**

ງົບປະມານໃນການປະກອບເຄື່ອງແບບ, ກາໝາຍ, ແບບພິມ ແລະ ບັດເຈົ້າໜ້າທີ່ການຄ້າ ໃຫ້ນຳໃຊ້ຮ່ວງເງິນລາຍຮັບວິຊາການ ຂອງວຽກງານແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ໃນແຕ່ລະຂັ້ນ ຕາມລະບຽບການເງິນ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 17 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ເປັນເຈົ້າການໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ບັນດາພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດຂອງຕົນ.

**ມາດຕາ 18 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງ ສະບັບເລກທີ 1418/ອຄ.ກຄພນ, ລົງວັນທີ 11 ຕຸລາ 2018.

**ລັດຖະມົນຕີ**

ມະໄລທອງ ກົມມະສິດ